# ປູ່ສອນຫຼານ

ນຳສະເໜີໂດຍ ຄູວັດ

ນະໂມນະມາ ວັນທາຂາບໄຫວ້ — นะโมนะมา วันทาขาบไหว้
ຍອດໄທ້ນາໂຖ ພິນໂຍປາງກ່ອນ — ยอดไท้นาโถ พินโยปางก่อน
ເຫັນບ່ອນນິທານ ຂໍວານວອນໄຫວ້ — เห็นบ่อนนิทาน ขอวานวอนไหว้
ຂໍໄດ້ປັນຍາແຜ່ກວ້າງ ເໝືອນສ້າງສຳເພົາ — ขอได้ปันยาแผ่กว้าง เหมือนสร้างสำเภา
ເອົາໄປຂີ່ຂ້າມ ນ້ຳກວ້າງຄຸງຄາ — เอาไปขี่ข้าม น้ำกว้างคุงคา
ເພຕາຍາວຍ່ານ ຂ້າມຜ່ານສະໝຸດ — เพตายาวย่าน ข้ามผ่านสมุทร
ສຸດຂອບຊຸມພູ ອິດູເມືອງໂລກ — สุดขอบชุมพู อิดูเมืองโลก
ເຫັນຄົນທຸກໂສກ ໄປດ້ວຍໂມຫາ — เห็นคนทุกข์โศก ไปด้วยโมหา
ໂລພາມັກມາກ ຢາກໄດ້ແວນຫຼາຍ — โลภามักมาก อยากได้แวนหลาย
ຢາກໃຫຍ່ກວ່າເພື່ອນ ຢາກເລື່ອນຂົ່ມເຫງ — อยากใหญ่กว่าเพื่อน อยากเลื่อนข่มเหง
ເຕັງຄົນຜູ້ນ້ອຍ ພາຍຊ້ອຍຊ່ວງຮອມ — เต็งคนผู้น้อย พายซ่อยซ่วงฮอม
ຜູ້ຂ້າຊອມເຫັນ ມີໃຈອິດູ — ผู้ข้าซอมเห็น มีใจอิดู
ອຸສູພາຍໜ້າ ຈິງກ່າວພາກກ້າ — อุสูพายหน้า จิงก่าวพากก้า
ໄວ້ຖ້າສອນຫຼານ ນິທານບ້ານນອກ — ไว้ถ้าสอนหลาน นิทานบ้านนอก
ຕ້ານບອກຄຳພີ ທີຄະນິກາຍ — ต้านบอกคัมภีร์ ฑีฆะนิกาย
ບອກຫຼາຍນິເທດ ໃນເຂດສົງສານ — บอกหลายเหลือเหตุ ในเขตสงสาน

ຝູງລູກຫລານຈື່ຈຳເອົາໄວ້ ໃຜຈື່ໄດ້ເມື່ອໜ້າບ່ອນຍືນ ຫຼິວແລພື້ນປ່າເອົາຮອງນັ່ງ
ເສື່ອນັ່ງຕ່ຳປ່າໄດ້ນັ່ງສູງ ເສື່ອລຸງຕາໃຫ້ບຳປານແກ້ວ ປູ່ສັ່ງແລ້ວຫຼານຫຼ້າຈື່ຈຳ
ທຳເປັນອຸນໃຫ້ມີໃຈກວ້າງ ປ່າອວດອ້າງຄວາມຮູ້ບໍ່ການ ຄວາມໃດງາມການອຸນຜູ້ຮູ້
ມັກເລ່ນຊູ້ໃຫ້ການດອມເມຍ ມັກເປັນເພຍໃຫ້ການພີ່ນ້ອງ ໃຈໃສສ່ອງກັນແລ້ວຈິງໄປ
ໄມ້ລຳດຽວລ້ອມຮົ້ວບໍ່ໄອວ່ ໄຜ່ບໍ່ພ້ອມແປງບ້ານບໍ່ເປັນ ເພິ່ນເຫັນໂຕປ່າອຳເຊິ້ງໄວ້
ບາດໂທດຕ້ອງມັນປິ້ນໃສ່ໂຕ ໃຈພາໂລປ່າຫາມາປຽບ ປ່າຫຽບແທ້ຝູງນີ້ບໍ່ດີ
ຂ້າລັກໜີປ່າເອົາຫຼາຍເທື່ອ ງ້ວນກິນເບື່ອປ່າໄວ້ໃນເຮືອນ ຄົນໃຈເບືອນປ່າເປັນພີ່ນ້ອງ
ມັນຈັກເປັນລ່ອງຄ່ອງຄືກ່ຽວສອງຄົມ ນ້ຳເຕັມໄຫມອດໄຟບໍ່ໄດ້ ເພິ່ນນັ່ງໃຫ້ໂຕປ່ານັ່ງຫິວ
ການຈຳຕິວຫາໃຜບໍ່ໄດ້ ຝູງເພື່ອນໃກ້ເອົາບໍ່ມີກິວ ເມຍກັບຜົວປ່າທຳໃຈເຊື່ອ
ບາດລາງເທື່ອມັນເບື່ອໃຈຊັງ ຄວາມໂມຫັງມັນມາແລ່ນຕ້ອງ ພີ່ແລນ້ອງບໍ່ແມ່ນໃຈດຽວ

ເພິ່ນທຽວຫາປ່າໄດ້ອຽວຄ່ຳ　ໄປທາງຕ່ຳໃນປ່າດົງຫຼວງ　ເອົາຄວາຍໂທນປ່າເຮັດດ້າມພ້າ
ທັງສາດຄ້າປ່າໄດ້ປູເຮືອນ　ຄິນໃຈເບື່ອນປ່າໄດ້ເປັນມິດ　ທຸຈຣິດມີສີ່ສາມອັນ
ອັດສະຈັນປັນຍາກ້ວນຫ້າ　ຄັນພັນອວານໃຫ້ແນມເບິ່ງຟ້າ　ປູ່ເພີຫຼານເອີ້ຍ
ຄັນບິງໜ້າຫຼຽວເບິ່ງປາຍປືນ　ປູ່ເພີຫຼານເອີ້ຍ　ເກິງສາລາປ່າຈາເນງທ່ານ
ຄວາມຮູ້ນັ້ນປ່າອ່ານຄອງເມືອງ　ຍິວເພິ່ນບັງປ່າອັນເປັນຊູ້　ໄຜມັກຮູ້ໄປສູ່ອະບາຽ
ຕາງເກີດມາເປັນເວນບໍແຄ້ວ　ປູ່ສັ່ງແລ້ວຫຼານຫຼ້າຈື່ຈຳ　ທຳອັນໃດໃສ່ໃຈອັນນັ້ນ
ຊູ້ເອ່ຽອ້າງພັນຊົ້ນປ່າຫຼຽວ　ທຽວທາງໄກຫຼຽວຫຼັງຫຼຽວໜ້າ　ຄິດສູ່ຊັ້ນດີແລ້ວຈິງນອນ
ຫິວຮຽງໝອນປ່າວອນຫາຊູ້　ຄິດຮຸ່ງຮູ້ຄຳປູ່ສັ່ງສອນ　ນອນບານໝາວບຽດສາວພຶງກຽດ
ເພິ່ນຄຽດແລ້ວປ່າໄດ້ກ່າວໃບ　ໄຟລາມລຸກປ່າເອົາຝົນມາອິ　ຊ້າງເພິ່ນຢັງໃຫ້ຫຼີກແຕ່ໄກ
ສຽງຊະໄນດັງກວ່າສຽງຄ້ອງ　ຄິດບໍກ້ອງໃຫ້ໝັ້ນພຽນການ　ຄວາມມົວໝອງປ່າການຜູ້ຄຽດ
ກົບອຽດຮ້ອງຕ້ອງຫົວໃຈຽ　ສາວຊູຊາງເສບຕາງແຕ່ຕ້າງ　ເປັນແມ່ຮ້າງເຮົາຈິງການຫາ
ຄວາມໄກຕາໃຫ້ຟັງດູກີ້　ຄິດພຸ້ນພີ້ບໍແມ່ນຄວາມດຽວ　ທຽວສິງສານມັນວຽນວົງຄອບ
ຮອກໄຕ່ໄມ້ລິງເຕັ້ນໄຕ່ອອນ　ຈອນຟອນໄຕ່ຮົ້ວໝີເມັ້ນບໍຕົງ　ລົງໂຕນໜີຊະນີຮ່ຳຮ້ອງ
ເຕາະຕໍ່ຕ້ອງຕີອື້ນເມືອພູ　ອອງສັດຕູໃຫ້ດູປານແກ້ວ　ຄວາມໝູ່ນີ້ແລ້ວດ້ວຍປັນຍາ
ຮັກເນງໂຕໃຫ້ຮັກລູງຕາ　ຮັກນາໂຕໃຫ້ຮັກພໍ່ບ້ານ　ໃກ້ຫົວລ້ານປ່າດ່ານິກຊຸມ
ເພິ່ນຫຸມໂຕປ່າໂງທາງຕ່າງ　ບ່າງກາງບ້ານປ່າຄາດເຄື່ອງຫຼາງ　ກາງພະສົງບໍມີນົບໄຫວ້
ຄ້ຽວໝາກແລ້ວເອົານວດມາສີ　ໄດ້ເນງຜູ້ດີປານແກ້ວຄູນລ່າງ　ໄດ້ເນງຜູ້ຊ່າງປານແກ້ວຄູນເຮືອນ
ໄດ້ເນງໃຈເບື່ອນປານກຸມໝູໃນຄອກ　ໄດ້ເນງຜູ້ຝອກປານແກ່ໄມ້ທາງປາງ　ເປັນຄົນຊາບປ່າສູອາບໂອ່ງ
ປ່າໄດ້ເຮັດໂຈດໂລດດັງອ້າອາງໂສນ　ປ່າໄດ້ເຮັດໂລງໂຮງສະເໝີຄົນຍີບ້າ　ປ່າໄດ້ເຮັດງົ່ວເງ່ງສະເໝີອ້າ
ຫຼົງທາງ　ເກິງບານຄ່ຳປ່ານັ່ງຫິນທາງ　ເດີນກາງຄືນປ່າສຸທຽວບ້ານ　ເອົ້າເຫື່ອນກວ້າງລ້ຽງໝູ່ໝູໝາ
ຕົກໝູ່ອຸນຊິອຸນເກືອມ້າ　ຕົກໝູ່ອ້າຊິອ້າພາງໂຊນ　ຕົກໝູ່ໂຈນຊິໂຈນຫາມໄຫເຫຼົ້າ
ປູ່ເພີຫຼານເພີ　ເປັນຄົນປຽບນົກເຈົ່າງໆໝອງ　ປ່າປຸນປອງນົກຍາງອາວລ້ວນ
ບາດແກ່ກ້ວນມັນບໍມີເລີງ　ເປັນຄົນຊາງຮ່ຳເພີງໃຫ້ກ່ອງ　ເປັນດັງຈ້ອງຫຸບແລ້ວແດດມາ
ເປັນຄົນໃນໂລກາປ່າຫຽນຕົ້ນເດື່ອ　ມີໝາກເຫື່ອປູ່ທີ່ແຄມຊິນ　ມັນມີຍິນສຸກແດງເຮືອງເຫື່ອ
ບໍຫາເມື່ອມັນບໍຫາບານ　ຄົນທຽວທາງເຫັນໄກຍິນປາກ　ບາງໃສ່ປາກມັນບໍມີຫວານ
ຍິ້ມບໍຫວານຄະຊານເຮືອງເຮື່ອ　ໝາກເດື່ອນັ້ນດູອາດດີກໝາ　ແມງໝີ່ມາເກີດໃນເຫຼືອລົ້ນ
ສຸກແຕ່ຕົ້ນເກີງເທົ່າຮອດປາງ　ເປັນຄົນຊາງຮ່ຳເພີງໃຫ້ກີ້　ປ່າໄດ້ເຮັດສັ້ນໆ ຈຳຈົ້ນບໍດີ

ອັນບໍດີມີສາມສີ່ຫ້າ　ມີເຮືອນບໍມີຝາ ນັ້ນກໍບໍດີໜຶ່ງ　ມີນາບໍມີຮ່ອງ　ນັ້ນກໍບໍດີໜຶ່ງ
ມີປ່ອງບໍມີຝາອັດ ນັ້ນກໍບໍດີໜຶ່ງ　ມີວັດບໍມີພະສົງ　ນັ້ນກໍບໍດີໜຶ່ງ　ມີກົງບໍມີບ່ອນຫຼັງ　ນັ້ນກໍບໍດີໜຶ່ງ
ແຄນດວງດຽວໝໍລຳພໍຮີ　ນັ້ນກໍບໍດີໜຶ່ງ　ອີຜູ້ດຽວເຈົ້າເຮືອນສືບຄົນ　ນັ້ນກໍບໍດີໜຶ່ງ

ເຮືອລຳດຽວໄປໄສເບີດບ້ານ  ນັ້ນກໍບໍດີໜຶ່ງ    ປ້ານຜອກພີ້ນມາແລ່ນຊູນຕໍ  ນັ້ນກໍບໍດີໜຶ່ງ
ເພິ່ນບໍອໍໂຕຫຼ່ານມາໃຫ້ ບາດໃຫ້ແລ້ວຄ້າງປູ່ເອັ້ມເບັ້ມ ນັ້ນກໍບໍດີໜຶ່ງ

ອັນກຽດຮ້າງມີຫ້າສີ່ສາມ    ເພິ່ນບໍເອີ້ນໂຕຫາກມາອານ ນັ້ນກໍກຽດໜຶ່ງ
ເພິ່ນບໍວານໂຕຫາກມາຊຽ ນັ້ນກໍກຽດໜຶ່ງ    ເພິ່ນບໍໃຫ້ໂຕຊໍ້າລັກເອົາ ນັ້ນກໍກຽດໜຶ່ງ
ບ່ອນໂຕເຊົາພາໂລອື້ໃສ່ ນັ້ນກໍກຽດໜຶ່ງ    ຕົ້ນມື້ເຊົ້າອື້ໃສ່ທາງຫຼວງ ນັ້ນກໍກຽດໜຶ່ງ
ເວົ້າຕຶກຕອງວ່າເພິ່ນເປັນຮ້າງ ນັ້ນກໍກຽດໜຶ່ງ    ບ້າງຄຳເວົ້າບົກບ່ອງແຕ່ໂຕ ນັ້ນກໍກຽດໜຶ່ງ
ເວົ້າໂມໂຫບົກໂຕແທງນອົ້ນ ນັ້ນກໍກຽດໜຶ່ງ    ເວົ້າຊົ້ນລົ້ນເຮັດໜ້າບໍອາຽ ນັ້ນກໍກຽດໜຶ່ງ
ໂຕຜູ້ຕ່ຳເວົ້າຈູງຜູ້ສູງ    ບາດໂຕຈູງມັນຊ້ຳບໍແລ່ນ ນັ້ນກໍກຽດໜຶ່ງ

ໂຮມເອົາກັນມີສາມສີ່ຫ້າ  ທ້າວກຳພ້າຫຼານຫຼ້າສີ່ຊາຽ  ອະທິບາຽຄຳສອນກູປູ່
ໃຫ້ຮູ້ຮີດຄອງປູ່ຄອງກິນ    ຫຼອນເປັນຄົນເປັນອຸນກັບເຈົ້າ    ເຮືອລຳນີ້ແຮ່ງຮົ່ວແຮ່ງເຕັມ
ເກືອໃສ່ໃນແຮ່ງເຄັມແຮ່ງຈືດ    ລາງເທື່ອມືດລາງເທື່ອສ່ອງແສງ    ນ້ຳບົກແຫ້ງມົດໄດ້ກິນປາ
ນ້ຳມາກມາປາໄດ້ກິນມົດ    ກົດເອົ້າຫັ້ນມີຫ້າສີ່ສາມ    ຝູງນົງຮາມຈື່ຈຳເມື່ອໜ້າ
ເປັນກຳພ້າປ່າໃຫ້ເພິ່ນຊັງ    ປູກເຄຫັງປ່າໃຫ້ໄກກວ້ານ    ປູກເຮືອນຮ້ານປ່າໃກ້ທາງຫຼວງ
ບ່ອນໃດອວາງປ່າໄດ້ໄປຕ້ອງ    ຮັກພີ່ນ້ອງຝູງໝູ່ວົງສາ    ຮັກລູງຕາອາວອາເຊື້ອໂຄດ
ເສື້ອຜ້າຫົ່ມປ່າເລັກຈາກຄິງ    ໄດ້ເມຽຜູ້ດີເໝືອນສີບໄຖອາງ    ເມຽເປັນນາງນຸ່ງຜ້າໃໝ່
ນາແຮ່ງໃຫຽ່ກ້າຊ້ຳແຮ່ງເຫຼືອ    ໄດ້ເມຽບໍດີເໝືອນສີບໄຖເຫຼັກ    ເມຽປາກເກົາກ໌ ຍິວນຸ່ງຜ້າພຽ
ນາແຮ່ງນຽກ້າຊ້ຳບໍພໍ    ໄປອໍກິນສູ່ວັນເພິ່ນເວົ້າ    ເມຽເອົ້າບ້ານໝາເຫົ່າແຊວ໔
ອັນໜຶ່ງ ເມຽວອນປ່າບິນ    ເຮັດກິນປ່າຄ້ານ    ຄົນເອົ້າບ້ານປ່າຕ້ານຄວາມອາຽ
ເປັນຄົນຊາຽປ່າສຸຄິດໃກ້    ເປັນບ່ອນໄດ້ປ່າໃຫ້ເສຽຄຸນ    ເພິ່ນທຳບຸນໂຕປ່າທຳບາບ
ໄປອາບນ້ຳວັງໃຫຽ່ສືອາ    ສາຫົວເສຽຫາງຄຳໂສກເສົ້າ    ແລ້ວຈິງເວົ້າຄຳບຸນຄຳທານ
ໃຫ້ລູກຫຼານຈື່ຈຳເອົາໄວ້    ໃຜຜູ້ໄດ້ໃຫ້ເວົ້າສືບໄປ    ເປັນຄົນໃນໃຫ້ຮຽນຄວາມຮູ້
ເຮັດສູ່ຫູ່ເອົາບໍມີຍຳ    ເຮັດຊຳງໍາເອົາບໍມີບ້ານ    ໄປທ່ຽວບ້ານໃຫ້ເບິ່ງຫົນທາງ
ຄົນຕາຟາງໃຫ້ຫຼີກມັນກ່ອນ    ບ່ອນຜູ້ໃຫຽ່ປ່າໄດ້ໄປແທນ    ເພິ່ນຫວງແຫນປ່າໄດ້ໄປຕ້ອງ
ຂອງພີ່ນ້ອງປ່າໄດ້ໄປອໍ    ບ່ອນບໍພໍມັນຮູ້ຜິດແຜກ    ເວົ້າແທກບ້ານມັນບໍມີເຮືອງ
ເວົ້າແທກເມືອງມັນເປັນສູນເສົ້າ    ງາມແຕ່ເອົ້າເຮັດນາແຄມເໝືອງ    ງາມແຕ່ເມືອງມີເຈົ້າຜູໜຶ່ງ
ລ້ຳກວ່ານັ້ນໜຽຜ່ອນກັນລົງ    ເງິນເຕັມກົງປ່າເວົ້າອວດອ້າງ    ຜູເພິ່ນກວ້າງມີມາກກວ່າໂຕ
ໃຈໂມໂຫພາໂລກັນມາກ    ປາກໄປກ່ອນມັນຮູ້ເປັນກຳ    ບໍເຮັດນຳມັນຮູ້ເປັນບາບ
ບໍລາບພາບເມື່ອໜ້າເມື່ອຫຼັງ    ເພິ່ນຊັງໂຕໝັ້ນໄປທ່ຽວເວົ້າ    ບ້ານສູນເສົ້າມີເກົ້າຫຼາຽຄົນ
ປູ່ຫຼາຽຄົນມັນດີກວ່ານີ້    ເວົ້າຈີ້ຈົ້ນມັນອຸ່ນນັນ໔

ປູ່ນຳກັນມີຄຸນພັນສິ່ງ ຄຸນໜຶ່ງນັ້ນ ຂ້າມນ້ຳພາຽເຮືອ ຄຸນໜຶ່ງນັ້ນ ເຫັນເສືອເອີ້ນບອກ
ຄຸນໜຶ່ງນັ້ນ ຄວາຽຄອກເຂົ້າມາ ຄຸນໜຶ່ງນັ້ນ ວາຈາຖາມເຫດ ຄຸນໜຶ່ງນັ້ນ ຈິບເພດຄູບາ
ຄຸນໜຶ່ງນັ້ນ ຣາຊາບິດໃຫຽ່ ຄຸນໜຶ່ງນັ້ນ ໄດ້ໄຕ່ຫີນທາງ ຄຸນໜຶ່ງນັ້ນ ໄດ້ວາງຂອງຝາກ
ຄຸນໜຶ່ງນັ້ນ ໄດ້ປາກບົ້ມຂອງ ຄຸນໜຶ່ງນັ້ນ ຜີປອງຂໍໄອ່ ຄຸນໜຶ່ງນັ້ນ ໄດ້ໃຊ້ເບິ່ງຕາ
ປູ່ພະບາຈາແຕ່ພໍເວົ້າ ເວົ້າຈີ້ນບອກແຕ່ພໍຄຽງ ອັນໃຫ້ພຽງມີຄຸນພັນເສດ
ຕັ້ງສັງເກດມັນບຶດບາວໄກ

ຕະໂຕຕັ້ງຈາໄປບິດໃໝ່ ຫຼານໃຫຽ່ແລ້ວໃຫ້ຈື່ຄຳສອນ ເປັນອາພອນນິຄົມບ້ານພອກ
ປູ່ອອກເຂດຄາວນີ້ຄາວຄືນ ຄຸນເອົາມີນຳກັນຮີ້ສິ່ງ ຄຸນໜຶ່ງນັ້ນ ຝາກຊ້າງກັບຄວາຽ
ຄຸນໜຶ່ງນັ້ນ ໄປກາຽແວຈອດ ຄຸນໜຶ່ງນັ້ນ ຮອດແລ້ວຄ່ຳນອນ ຄຸນໜຶ່ງນັ້ນ ໄປວອນຂໍອ້າວ
ຄຸນໜຶ່ງນັ້ນ ໄປເວົ້າຂໍເກືອ ຄຸນໜຶ່ງນັ້ນ ບົ້ມເຮືອຂ້າມນ້ຳ ຄຸນໜຶ່ງນັ້ນ ບົ້ມຊ້ຳທັງພາຽ
ບາດໂຕກາຽເປັນທາງຫຼາຽເສັ້ນ ເວົ້າບໍ່ໄດ້ຊ້ຳເລົ່າຄືນຖາມ ເປັນຄວາມງາມຫີນທາງໃຫ້ຊື່
ຈື່ໄດ້ແລ້ວຈຶ່ງໄດ້ໄຕ່ໄປ ຕາມວິໄສພາຽໂຕພາຽໜ້າ ທ້າວກຳພ້າຫຼານຫຼ້າສີ່ຊາຽ
ອະທິບາຽປູ່ສອນສັ່ງໄວ້ ຄຶດຊອກໄຊ້ຈຶ່ງໄດ້ຈຶ່ງເຫັນ ຕາວັນເບັ່ນມາແລ້ວຕົກຕ່ຳ
ຕາວັນຄ່ຳໃຫ້ເຈົ້າໄຫວ້ວອນ ດອກໄມ້ຊອນທຽນຕາມຕິດໄຕ້ ນົບພອບໄຫວ້ກົກໄມ້ເທິງຫົວ
ນົບຮອບຕົວອິນພົມປູ່ຟ້າ ເທພະດາບ່ອນທບ້າພູເຂົາ ທັ້ງຮົ່ມເງົາບ່ອນໂຕເຊົາຢູ່
ນົບໃຫ້ຄູ່ນາງທໍຣະນີ ຄຸນເພິ່ນມີອະນັນເຫຼືອລົ້ນ ຂໍໃຫ້ພົ້ນພາວະໂພຽໄພ
ສັດໂຕໃດຫາກມາທຽວທ່ອງ ໄວ້ໃນທ້ອງນາງທໍຣະນີ ຝາກອິນຊີປະໄວ້ມີ້ມຮຸ່ງ
ຕື່ນຮຸ່ງເຊົ້າຫຸງຂ້າວຫຸງປາ ເອົາບູຊານົບທາຄຸນແກ້ວ ບູຊາແລ້ວຈຶ່ງພ້ອມກັນກິນ
ເມື່ອຈັກໄປໃຫ້ບິກມື້ໄຫວ້ ລາຮົ່ມໄມ້ນາງທໍຣະນີ ຂໍໃຫ້ມີຣິດທາແກ່ກ້າ
ເປັນດັ່ງພ້າເອ່ນໄມ້ຄົມບາງ ໄປນຳທາງຕາຫຼຽວໄປປ່າ ຫຼຽວໄປຄົ່ວຄົບບ່ອນຂອງກິນ
ເກີດເທິງດິນເຫັດຫາວດອກຫວ້ານ ໄປເຖິງບ້ານໃຫ້ຮ້ອງໃຫ້ຂໍ ໃຫ້ບິກມີຂຶ້ນມາເທິງຄິ້ວ
ເຫັນເພິ່ນທົ້ວແມ່ນສິ່ງຂອງກິນ ເພິ່ນຢູ່ດິນໃຫ້ເຈົ້ານັ້ງເວົ້າ ແມ່ນຜູ້ເກົ້າຄົມບຸນນັກປາດ
ຜູ້ສາດເພິ່ນໃຫ້ທານຫຼາຽ ຜູ້ອິນັງຄົນດາຽໃຫ້ນີ້ ເຈົ້າປ່າຄີ້ແຄງປາກແຄງໃຈ
ຂໍໄປໄກຈັກໄດ້ໄປໜ້າ ພົບບາດຫຼ້າແມ່ນພົບຫຽິງສາວ ໂສມພໍພາວພຽງໂຕເອີ້ນນ້ອງ
ປູ່ໃນທ້ອງແກ່ພໍປະມານ ໃຫ້ຫຼານເອີ້ນແມ່ເກົ້າຫົວນາຽ ພົບຄົນຊາຽຫົວຂາວຜົມຫງອກ
ປູ່ບອກໄວ້ໃຫ້ເອີ້ນຫົວຕາ ພົບພະບາໃຫ້ວ່າຈອມເຈົ້າ ຂໍທານຂ້າວໄປໃສ່ແລງງາຽ
ເຫັນຄົນຊາຽທົ້ວກາຽປ່າຊ້າ ເຫັນເມື່ອໜ້າຂໍອິບນິບກິນ ປ່າກະຫວິນລັກຫຼອນເພື່ອນຄູ່
ໄປຮອດໝູ່ໃຫ້ສູ່ກັນກິນ ປ່ານິນທາຕິຕຽນວິວາດ ປ່າອິງອາດປະໝາດຄົນຊາຽ
ມັນຮັກກາຽເໝືອນໂຕທຸກບ່ອນ ປ່າຜ່ອນຊ້ຳກໍ່ຕ່ຳຮໍລົງ ຊາຽປະຈົງບຸນຫຼາຽເຫຼືອມາກ

ບໍປາກປາກເໝືອນເຈົ້າເຕເນ    ຄິນສັບເພຢ້ານມາຟູມເຟື່ອ    ເພິ່ນຫາກເຫື້ອເຫັນໝົ້ນພະຣິກ
ຝ້ານຄິນຕິກອະນັນເຫຼືອລົ້ນ    ຝ້ານປາກພົ້ນບໍເພິ່ນບໍໂຕ    ອຸປະໂສອຸປະໄສໄວ້ກ່ອນ
ປູ່ສີເວົ້າບົ້ນບ່ອນມັນຮອມ    ໃຫ້ເຈົ້າຊອມສັດງູຍາວຍິ່ງ    ບໍມີຕີ່ງມີຕີນບໍມີ
ຄິວຄີໄປມັນໄວປານມ້າ    ປູໄປຄ້າມັນບໍມີຫິວ    ມີແຕ່ຕິວແປນຕີນໄປໄດ້
ນົກຈັບໄມ້ແມ່ໄກ່ແມ່ກາ    ນົມບໍມີລ້ຽງລູກບັງໃຫຽ່    ສັດໂຕໃດບໍມີກະດູກ
ເອົາໃບຍູກເປັນບຸ້ງຫໍ່ໂຕ    ໂພທິສັດເກີດມາປາງກ່ອນ    ບໍຫ່ອນເວົ້າອວດອ້າງບໍສູງ
ບຸນຫາກຈູງໄປຫາຈຶ່ງໄດ້    ຕັ້ງທ່ຽງໄວ້ມີສີນສີ່ຕິວ    ບໍອ້າສັດມາກິນກັບອ້າວ
ອອງມີເຈົ້າບໍໄດ້ອິ່ມເທງ    ເນຽອອງເອົາບໍໄດ້ຈັບຕ້ອງ    ບໍກ່ຽວອ້ອງຄຳລ່ຽງຕິວະພາງ
ສີນສີ່ຕິວອັນນີ້ເປັນເຄົ້າ    ປູ່ສີເວົ້າຊັກອອກໃນທຳ    ໃຫ້ລູກຫຼານຈື່ໄວ້ໃນອົກ
ໝົ້ນພະຣິກມັນຢູ່ໃນໃຈ    ໝໍ້ໄຟແດງມັນຢູ່ໃນປາກ    ໝໍ້ທຸກຍາກມັນຢູ່ໃນມື
ໃຜບໍກໍ່ປູ່ສອນສັ່ງໄວ້    ໃຜບໍໄດ້ກາບປູ່ສອນຫຼານ

ຝ້ານແຕ່ເປັນນິທານໝາລາປາງກ່ອນ    ອ້າເກັບໄດ້ລູກອ່ອນພັງພອນ
ເອົາມາສອນໃນເຮືອນປາກກ້ຽງ    ອ້າລ້ຽງໄວ້ຊາລູກຄິ້ງຕີນ    ສອງຜິວເນຽເດີນໄພປ່າກວ້າງ
ປະລູກຄ່າງໃນປ່າດອມພອນ    ງູເຫົ່າຫຼອນອົ້ນມາອິບຕອດ    ພິດພຸ່ງຊອດເອົ້າຫິວເລີ້ຽຕາງ
ພັງພອນເຫັນພາງລຸນອິບໄດ້    ຄາບໄປໄວ້ຕໍ່ໜ້າຄີໄຟ    ສອງຜິວເນຽເດີນໄພມາຮອດ
ພອນແລ່ນສອດກ້ຽວແອ່ງກ້ຽວອາ    ໂລຫິຕາແດງໄຫຼເຫລືອປາກ    ລູກອ່ອນຝີຕາງຊາກພິດງູ
ເອົາຄິດດູພັງພອນອິບລູກ    ຈັກຍູກໄດ້ລວດອ້າພອນຕາງ    ຄວາມຈິບຫາງພາງໂຕສອງເຫຼົ່າ
ຈຶ່ງເຫັນເຫົ່າຕາງອອກຄີໄຟ    ສຸດເຫຼືອໃຈເສຽພອນທັ້ງລູກ    ຄວາມອັນນີ້ມາຍູກສີງສານ
ໃຫ້ລູກຫຼານຈື່ຈຳດີມາກ    ພາກໜຶ່ງນັ້ນເປັນດັ່ງມິດແດງ    ແນງໄປໄວອອບດິ້ງວຽນຮອບ
ມັນຫາກຄອບອອງເກົ່າເລີ້ງ໔    ເກັ່ງປີເດືອນວັນຍາມມື້ຄອບ

ຕາເວັນຫຼອບຕິກຕ່ຳພອແລງ    ຫາອອງແພງອາຫານກັບອ້າວ    ພາກັນເຕົ້າກິນອ້າວແຮງເສຽ
ປ່າຊຳເຊຽໄປຫາການເລ່ນ    ກິນອ້າວແລ້ວຫາວຽກຫາການ    ຫຼານຍູບິງຫາໄໝຫາຝ້າງ
ຫຼານຍູຊາງຈັກຕອກເຫຼົາຫວາງ    ອັນເປັນສາງຝົ້ນເຊືອກຝັ້ນປໍ    ປ່າອໍແອຊໍແຊປາກເວົ້າ
ຝາເຮືອນເຈົ້າມັນຢູ່ບັງຕາ    ຫຼຽວໄປມາເດືອນດຳຄ່ຳມືດ    ປັກຕູຮົ້ວປ່າເປີດປ່າໄອ
ບໍໂຄຄັດໃສ່ໄລຕອກລົ້ມ    ຝ້ານຄິນກົ້ມໄຟໃສ່ຫຼັງເຮືອນ    ຝາປັກຕູໃນເຮືອນອັດແຈບ
ປ່າງັບແງບປ່ອງອ້ຽມປ່ອງລົມ    ເອົາໄລກົມຄັດເສຽໃຫ້ໝັ້ນ    ເວົ້າຈຳຈົ້ນມັນກໍ້ກສູ່ຄິນ
ເວົ້າຈຳຈິນມັນກຶງສູ່ໜ້າ    ພິບບາດຫຼ້າໂຕເວົ້າທານອວັນ    ເອົາຍົບຊັນຟັງເອົາໃຫ້ໄດ້
ພະບາດໄທ້ບ້ານໃຫຽ່ເມືອງຫຼວງ    ຄິນທັ້ງປວງໄປໂຮມເຝົ້າເຈົ້າ    ເສນາເຄົ້າເມືອງແສນເມືອງຈັນ
ໃຈເອັ້ມອັນພະລັນເປັນແກ່    ຄວາມແຜ່ເທົ້າໂຮມອາດໂລມຍາ    ແຕ່ງແປງຕາເສນາຫຼາງພວກ

ພວກໜຶ່ງໄວ້ຈອບດ້ານກາງເວັນ ພວກໜຶ່ງໄວ້ຕະເວນກາງຄືນ ພວກໜຶ່ງໄວ້ໄປຢືນໃຕ້ລ່າງ
ຟັງສຽງຕ່າງຣະຫັດຕິຕິນ ເຈົ້າເປັນຄົນໃຫ້ມີໃຈກວ້າງ ເອົາຫູຫ້າງຟັງບ້ານຟັງເມືອງ
ແສງໄຟເຮືອງກະບອງປ່າອາດ ເຮັດສຽງອາດກະຣົກະແຮມ ຄົນໄປແນມຄົນເຫັນເອົາຢ້ານ
ຄົນຫ່ຽວບ້ານເອົາຢ້ານແລ່ນໜີ ເອົ້າໄປເຮືອນນອນນິດນອນໝີ່ ຟັງສຽງປີ່ສຽງແຄນອຸດເອົ້າ
ພະບາດເຈົ້າເພິ່ນເສບບັນນອນ

ເດັກອອນຊອນພໍນອນປູ່ແລ້ວ ເຈົ້າກວາດແຜ້ວມ້ຽນພ້າຫຼາໄນ ບ່ອນຄີໄຟປ່າໃຫ້ມັນຣິກາ
ກວາດເຖົ່າປົກດິ້ນໄຟປະໄວ້ ບາງກ້ວງໄດ້ຕົກເອົ້າໝ່າລົງ ໃຫ້ເຈົ້າວ່າມຸມະມູນອື້ນອິ່ມລົ້ນເຫຼືອງາງ
ເປັນຄົນຊາງໃຫ້ຮຽນເອົາໄວ້ ປູ່ຫາກໄດ້ນຳເຈົ້າເສດກີ໋ ສົມບັດມີເງິນຄຳນັບໂກດ
ໂຊດບອກໃຫ້ຫຼານແກ້ວຈື່ເອົາ

ເອົ້າໄປນອນໃຫ້ບໍມືນິບ ຈິບເພດເວົ້າພຸດທັງທຳມັງ ສັງຄັງນັ້ນແມ່ນແກ້ວທັ້ງສາມ
ເພິ່ນຮຽງານອິນພົມປູ່ຟ້າ ທັ້ງລຸ່ມລ້ານາງທໍຣະນີ ອໍປ່ານີໂພງໄພມາຕ້ອງ
ນອນໃນຫ້ອງສະຫວັດສະດີ ມີສາດໝອນຫົວຊອນລົງແລ້ວ ຕາໜ່ວງແກ້ວປີ້ນອື້ນເມືອເທິງ
ຄິດຮ່ຳເພິງບ່ອນສ້າງບ່ອນແປງ ສົມພໍແຮງພໍໂຕເຮັດໄດ້ ຄິດຊອກໄຊ້ຈິງໃຫ້ຫຼັບໄປ
ເທພະດາຕົນໃສວິເສດ ຈິບເພດໜ້າສື່ອີງລົງມາ ຮັກສາທະວານເອົາລົມຊ່ອນໄວ້
ປ້ານໃຈອາດທົ່ວໄປວຽເ ພີຣັກສາໃນອັນທັງຫ້າ ຜ້າທິບອ່ອນຈຸກບ່ອນຫົວໃຈ
ພາບໃນໂຕຫຼັບໄປສອດເຊ ຫຼັບໄປຮອດເທິງເທົ່າຫ່ຽງຄືນ ຕາປາກມືນມັນນອນບໍຕື່ນ
ຊື່ນທັ້ງປາກປາກວ່າພຸດໂທ ເຫັນໂຕມຶງແລ້ວ ຕາໜ່ວງແກ້ວຊ້ຳເລົ່າຫຼັບໄປ
ຕາມນິໄສພາບໂຕຫຼັບແຊບ ຫຼັບຈົມແຈບໄປຮອດຄ່ອນຄືນ ຕາມືນຕຶງພິກຄຶງປາກເວົ້າ
ຕື່ມຄວາມເຄົ້າເອົ້າວ່າທຳໂມ ເຫັນໂຕມຶງແລ້ວ ຕາໜ່ວງແກ້ວຊ້ຳເລົ່າຫຼັບໄປ
ຕາມວິໄສເທິງແກໃກ້ຮຸ່ງ ຕາມືນມຸ່ງໄກ່ອັນຫົວເມືອງ ເຈົ້າລຸກເປືອງນັ່ງອື້ນແຕ່ບ່ອນ
ເປັນໃຈອ່ອນມັນຮູ້ຫາວນອນ ຜ້າຫົ່ມໝອນມ້ວນດີພັບເຄິ່ງ ທາງຕົ້ນເຊິງໃຫ້ລາກໄວ້ລຸ່ມ
ທຸກຊຸມໝູ່ເຈົ້າເທພະດາ ລາອື້ນເມືອໄຫວ້ທາດເກດແກ້ວ ປັດອ່ວງແຜ້ວພະທາດເຈດີ
ຮີດຄອງມີເພິ່ນລະບໍໄດ້ ຄົນຮູ້ໃດມັກນອນຕື່ນສວຽ ເທພະບະດາຫິນຫວງດ່າປີ
ໃຫ້ສຸດຊຽືຕົກຕ່ຳດຳລົງ ປູ່ປະສົງບອກຫຼານໃຫ້ຍ່ຽນ ເຈົ້າປ່າຮຽນມັກນອນຕື່ນສວຽ
ທັ້ງບິງຊາງຮູໃຫຽ່ຮູນັ້ ເພິ່ນຫາກປີດັ່ງນັ້ນສູ່ຄົນ ອາບຸຈິນອື້ນໄດ້ສີບປີ
ໃຫ້ນອນດີຕື່ນເດິກລຸກເຊົ້າ ອິນພົມເຈົາເພິ່ນສັ່ງເພິ່ນສອນ ເພິ່ນໃຫ້ພອນອັນດີວິເສດ
ຕັ້ງສັງເກດໄດ້ຮີຊາວປີ ເປັນເສດກີໃຫ້ມັ່ງມູນອື້ນ ລື່ນກວ່ານັ້ນບຸນກ້າແຕ່ຫຼັງ

ຟັງເອົາເບີປ່າມັກນອນແທ້   ເຫັນເພິ່ນນອນປ່ານອນດັ່ງເພິ່ນ   ໃຫ້ນອນຕ່າງເພິ່ນ
ເຫັນເພິ່ນຫຼັບປ່າຫຼັບດັ່ງເພິ່ນ   ໃຫ້ຫຼັບຕ່າງເພິ່ນ   ເຫັນເພິ່ນຕື່ງປ່າຕື່ງດັ່ງເພິ່ນ ໃຫ້ຕື່ງຕ່າງເພິ່ນ
ເຫັນເພິ່ນຕື່ນ ປ່າຕື່ນດັ່ງເພິ່ນ ໃຫ້ຕື່ນຕ່າງເພິ່ນ

ຮຽນລຸກເຊົ້ານຶ່ງອ້າວໃສ່ບາດ   ບູຊາອາດຫາແກ້ວທັ້ງສາມ   ໃນອາຣາມສະຖານພະເຈົ້າ
ໃນເຄົ້າໄມ້ຕົ້ນໃຫຍ່ໂພສີ   ໃນເຈດີພະທາດແກ້ວກູ່   ໃນບ່ອນຢູ່ເທິງທິວໂຕນອນ
ລາງເທື່ອຫຼອນພໍ້ຄົນທຸກໄຮ້   ເພິ່ນອໍໄດ້ເຈົ້າໃຫ້ທານໄປ   ຕາມນິໄສອົງໂຕມີນັ້ນ
ບາດສຸດຊີ້ແມ່ນສາມມະເນນ   ມະຫາເກນເກຣາຕົນໃຫຍ່   ໝູໝາໄກ່ເປັດກາເປັນເຄົ້າ
ໃຫ້ທານອ້າວປະເສີດໜັກໜາ   ອຸບປະມາດັ່ງຄົນທຸກໄຮ້   ໄດ້ໃຫ້ອ້າວເປັນທານແກ່ກາ
ບໍຣິວານບັງມີພໍຮື   ເຈົ້າບັງນີ້ໃຫ້ຈື່ຈຳເອົາ   ເປັນສຳເນົາໃນປູມພີກາດ
ຍູສະຫຼາດເພິ່ນແຕ່ງແປງມາ   ຫາຄຳສອນໃສ່ໃຈຮຽນຮູ້   ປູ່ຫາກໄດ້ແຕ່ສືບ໔ ມາ

ເປັນວາຈາຣິດຫອມຫ່ວງເຮົ້າ   ຫອມສິ່ງດອກຄັດເຄົ້າກ້ານກ່ອງບົວທອງ
ຫອມສິ່ງດອກກາງຂອງຮັງຍາຍອມປ່າ   ຫອມສິ່ງຄົນຜ່າໄມ້ທ່ອນແກ່ນຈັນແດງ
ເປັນຂອງແພງເຈົ້າຂຸນນັກປາດ   ຍູສະຫຼາດເໝືອນນ້ຳເຕັມໄຫ
ບໍໄປມາບໍຕົກບໍຟຽດ   ເຕັມບໍຫຽດເໝືອນນ້ຳທະເລ   ຄົນເສເພໄດ້ຄວາມແລນີ້
ໃຈຄຶດຄື້ປາກນັ້ນຜັນແປ   ຫົວໃຈໂກນສິ່ງບັ້ງໄມ້ໄຜ່   ລົມພັດໃສ່ໃບຫູອອກປາກ
ການທີ່ຍາກໄດ້ເຝົ້າແຕ່ນາ   ໃຫ້ເຝົ້ານາວາຈາຮ່ອງເພື້ອ   ບໍໃຊ້ເຊື້ອນັກປາດໃຈຕັນ
ອັດສະຈັນປູ່ສອນຫຼານນີ້

**(ບັງມີອີກ)**